ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງໄຊຍະບູລີ

ເລກທີ...72.../ສພຂ.ຊຍ
ໄຊຍະບູລີ, ວັນທີ 31 ທັນວາ 2021

# ມະຕິ
# ກອງປະຊຸມສະພາປະຊາຊົນແຂວງໄຊຍະບູລີ
# ວ່າດ້ວຍການຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2020, ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ 9 ເດືອນ, ຄາດຄະເນໝົດປີ 2021 ແລະ ທິດທາງແຜນການ ປີ 2022

- ອີງຕາມ ລັດຖະທຳມະນູນແຫ່ງ ສປປ ລາວ ສະບັບປັບປຸງ ປີ 2015 ມາດຕາ 77 ສິດ ແລະ ໜ້າທີ່ ຂອງ ສະພາປະຊາຊົນຂັ້ນແຂວງ.
- ອີງຕາມ ກົດໝາຍວ່າດ້ວຍ ການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020, ມາດຕາ 12 ຂໍ້ 2.1 ແລະ ມາດຕາ 59 ຂໍ້ 1.
- ອີງຕາມ ບົດລາຍງານຂອງອົງການປົກຄອງແຂວງ ລົງວັນທີ 29 ທັນວາ 2022.

ຜ່ານການຄົ້ນຄວ້າ, ປະກອບຄຳເຫັນ ແລະ ພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ຕໍ່ບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2020, ຈັດຕັ້ງແຜນງົບປະມານແຫ່ງລັດຂອງແຂວງ 9 ເດືອນ, ຄາດຄະເນໝົດປີ 2021 ແລະ ທິດທາງແຜນການ ປີ 2022, ໃນກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາປະຊາຊົນແຂວງ ຊຸດທີ II.

## ກອງປະຊຸມຕົກລົງ:

**ມາດຕາ 1 ຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2020**

ກອງປະຊຸມສະພາປະຊາຊົນແຂວງ ສະແດງຄວາມຊົມເຊີຍ ອົງການປົກຄອງແຂວງ ທີ່ໄດ້ເອົາໃຈໃສ່ຊີ້ນຳໃນການຈັດຕັ້ງປະຕິບັດ ແຜນງົບປະມານແຫ່ງລັດ ຂອງແຂວງ ຢ່າງຕັ້ງໜ້າ ແລະ ເຫັນດີຕໍ່ການສະຫຼຸບຂາດຕົວເລກການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2020 ດັ່ງນີ້:

- ດ້ານລາຍຮັບ ປະຕິບັດໄດ້ 208.90 ຕື້ກີບ, ເທົ່າກັບ 116,76% ຂອງແຜນການປີ;
- ດ້ານລາຍຈ່າຍ ປະຕິບັດໄດ້ 496.55 ຕື້ກີບ, ເທົ່າກັບ 98,14% ຂອງແຜນການປີ;
- ດ້ານດຸ່ນດ່ຽງງົບປະມານ ປະຕິບັດໄດ້ 327.04 ຕື້ກີບ, ເທົ່າກັບ 100% ຂອງແຜນການປີ.

**ມາດຕາ 2 ຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງໄຊຍະບູລີ 9 ເດືອນ, ຄາດຄະເນໝົດປີ 2021**

ກອງປະຊຸມສະໄໝປະຊາຊົນແຂວງ ສະແດງຄວາມຊົມເຊີຍ ອົງການປົກຄອງແຂວງ ທີ່ໄດ້ເອົາໃຈໃສ່ຊີ້ນໍາໃນການຈັດຕັ້ງປະຕິບັດ ແຜນງົບປະມານແຫ່ງລັດ ຂອງແຂວງ ຢ່າງຕັ້ງໜ້າ ແລະ ເຫັນດີຕໍ່ເນື້ອໃນບົດລາຍງານ ດັ່ງນີ້:

**1. ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ 9 ເດືອນ**

- ດ້ານລາຍຮັບ ປະຕິບັດໄດ້ 715,90 ຕື້ກີບ, ເທົ່າກັບ 67,20% ຂອງແຜນການປີ; ໃນນີ້: ລາຍຮັບພູດສູນກາງປະຕິບັດໃຫ້ໄດ້ 570,15 ຕື້ກີບ, ເທົ່າກັບ 67,81% ຂອງແຜນການປີ ແລະ ລາຍຮັບພາຍໃນປະຕິບັດໃຫ້ໄດ້ 145,75 ຕື້ກີບ, ເທົ່າກັບ 64,92% ຂອງແຜນການປີ;
- ດ້ານລາຍຈ່າຍ ປະຕິບັດໄດ້ 381,88 ຕື້ກີບ, ເທົ່າກັບ 79,90% ຂອງແຜນການປີ;
- ດ້ານດຸ່ນດ່ຽງ ປະຕິບັດໄດ້ 244,74 ຕື້ກີບ, ເທົ່າກັບ 96,56% ຂອງແຜນການປີ;

**2. ຄາດຄະເນການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ຄາດຄະເນໝົດປີ 2021**

- ດ້ານລາຍຮັບ ຄາດຄະເນໝົດປີ ຈະປະຕິບັດໄດ້ 1.046,93 ຕື້ກີບ, ເທົ່າກັບ 98,27% ຂອງແຜນການປີ. ໃນນີ້: ລາຍຮັບພູດສູນກາງປະຕິບັດໃຫ້ໄດ້ 759,32 ຕື້ກີບ, ເທົ່າກັບ 90,30% ຂອງແຜນການປີ ແລະ ລາຍຮັບພາຍໃນປະຕິບັດໃຫ້ໄດ້ 287,61 ຕື້ກີບ, ເທົ່າກັບ 128,11% ຂອງແຜນການປີ;
- ດ້ານລາຍຈ່າຍ ຄາດຄະເນໝົດປີ ຈະປະຕິບັດໄດ້ 531,19 ຕື້ກີບ, ເທົ່າກັບ 111,14% ຂອງແຜນການປີ;
- ສູນກາງດຸ່ນດ່ຽງໃຫ້ແຂວງ ຄາດຄະເນໝົດປີ ຈະປະຕິບັດໄດ້ 316,53 ຕື້ກີບ, ເທົ່າກັບ 124,88% ຂອງແຜນການປີ;

**ມາດຕາ 3 ຮັບຮອງເອົາແຜນງົບປະມານແຫ່ງລັດຂອງແຂວງ ປີ 2022**

ກອງປະຊຸມຮັບຮອງເອົາແຜນງົບປະມານແຫ່ງລັດຂອງແຂວງ ປີ 2022 ຕາມການສະເໜີຂອງອົງການປົກຄອງແຂວງ ເຊິ່ງເປັນແຜນງົບປະມານຂອງແຂວງ ທີ່ສ້າງທ່າຫັນປ່ຽນບຸກທະລຸດ້ານລາຍຮັບງົບປະມານຢ່າງແຂງແຮງ, ສາມາດຮັບປະກັນລາຍຈ່າຍທີ່ເປັນຂອງແຂວງ, ພ້ອມທັງສ້າງຄວາມສົມດູນ ເຮັດໃຫ້ລາຍຮັບພາຍໃນກຸ່ມລາຍຈ່າຍພາຍໃນ ແລະ ຍັງມີສ່ວນເຫຼືອຊໍາລະໜີ້ສິນ, ດັ່ງນີ້:

**1. ລາຍຮັບທັງໝົດ: 1.125,37 ຕື້ກີບ, ໃນນັ້ນ:**

- ລາຍຮັບພູດສູນກາງ 890,86 ຕື້ກີບ;
- ລາຍຮັບພາຍໃນແຂວງ 234,51 ຕື້ກີບ; ໃນນີ້:
  + ສ່ວຍສາອາກອນ 228,80 ຕື້ກີບ;
  + ຄຸ້ມຄອງຊັບສິນຂອງລັດ 5,71 ຕື້ກີບ.

**2. ລາຍຈ່າຍທັງໝົດ: 472,90 ຕື້ກີບ, ໃນນັ້ນ:**

- ເງິນເດືອນ+ເງິນນະໂຍບາຍ (ພາກ 60+61) 406,52 ຕື້ກີບ;
- ເງິນບໍລິຫານລັດ (ພາກ 62) 49,30 ຕື້ກີບ;
- ເງິນດັດສົມສິ່ງເສີມ (ພາກ 63) 14,15 ຕື້ກີບ;
- ລາຍຈ່າຍບັງເອີນ (ພາກ 65) 2,50 ຕື້ກີບ;
- ຊື້ຊັບສົມບັດຄົງທີ່ (ພາກ 66) 0,43 ຕື້ກີບ;

- ການລົງທຶນ (ພາກ 67) (ບໍ່ທັນແຈ້ງຕົວເລກ).

**3. ດຸ່ນດ່ຽງງົບປະມານ 238,39 ຕື້ກີບ.**

**ມາດຕາ 4 ຮັບຮອງເອົາມາດຕະການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2022**

ກອງປະຊຸມຮັບຮອງເອົາ 16 ມາດຕະການ ຕາມການສະເໜີຂອງອົງການປົກຄອງແຂວງ, ພ້ອມນັ້ນ ກອງປະຊຸມ ສະເໜີໃຫ້ປະຕິບັດແຜນງົບປະມານແບບຮັດກຸມ ແລະ ເອົາໃຈໃສ່ບາງມາດຕະການເພີ່ມເຕີມ ດັ່ງນີ້:

**1. ດ້ານລາຍຮັບ**

1) ໃຫ້ບັນດາຫົວໜ່ວຍງົບປະມານ ເປັນເຈົ້າການກວດຄືນ ແລະ ມອບລາຍຮັບຈາກການສອບເຫັນເພີ່ມ ປີ 2020 ຈຳນວນ 0,43 ຕື້ກີບ ເພື່ອເອົາເຂົ້າແຜນລາຍຮັບງົບປະມານຂອງແຂວງ ປີ 2022;
2) ຄຸ້ມຄອງການຈັດເກັບລາຍຮັບເຂົ້າງົບປະມານໃຫ້ຄົບຖ້ວນ ຕິດພັນກັບການຫັນເປັນທັນສະໄໝ, ເພີ່ມທະວີການອັດຊ່ອງວ່າງການຮົ່ວໄຫລ ຂອງບັນດາຖານລາຍຮັບ ຈາກການນຳເຂົ້າ ນ້ຳມັນເຊື້ອໄຟ, ວັດສະດຸກໍ່ສ້າງ, ເຄື່ອງໃຊ້ໄຟຟ້າ, ເຄື່ອງອຸປະໂພກ-ບໍລິໂພກ ແລະ ອື່ນໆ ໃຫ້ເຂັ້ມງວດ ເດັດຂາດ;
3) ເລັ່ງທວງ ແລະ ເກັບຄືນ ບັນດາໜີ້ຕ້ອງຮັບທີ່ຄ້າງມອບ, ລາຍຮັບກວດເຫັນເພີ່ມ ທີ່ສະສົມຕາມຜົນການກວດສອບໃນສົກປີຜ່ານມາ, ເອົາໃຈໃສ່ເກັບລາຍຮັບທີ່ມີຖານໝັ້ນຄົງແນ່ນອນ ເປັນຕົ້ນ: ພາສີນຳເຂົ້າສິນຄ້າ, ອາກອນທີ່ດິນ, ແຮ່ທາດ, ຄ່າທຳນຽມ ແລະ ຄ່າບໍລິການ, ຄ່າເຊົ່າ-ສຳປະທານ ໃຫ້ຄົບຖ້ວນຕາມກົດໝາຍ;
4) ກວດຄືນ ແລະ ຈັດເກັບລາຍຮັບ ຈາກບັນດາບໍລິສັດທີ່ໄດ້ຮັບອະນຸຍາດຂຸດຄົ້ນແຮ່ທາດ;
5) ສືບຕໍ່ສຳຫຼວດຖານລາຍຮັບໃໝ່ ໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ຊັດເຈນ ໂດຍສະເພາະ ທຸລະກິດທີ່ຕິດພັນກັບການບໍລິການ, ການປູກຝັງກະສິກຳເປັນສິນຄ້າ (ຕິດພັນກັບການສົ່ງອອກ), ການຂົນສົ່ງ ແລະ ອື່ນໆ.

**2. ດ້ານລາຍຈ່າຍ**

1) ຮີບຮ້ອນຈັດສັນງົບປະມານການລົງທຶນຂອງລັດ ປະຈຳປີ 2022 ແລະ ແຈ້ງແຜນລາຍຮັບ-ລາຍຈ່າຍ ຂອງບັນດາຂະແໜງການຂອງແຂວງ, ເມືອງ ໃຫ້ສະພາປະຊາຊົນແຂວງຮັບຊາບ ແລະ ພິຈາລະນາ;
2) ເອົາໃຈໃສ່ປະຕິບັດນະໂຍບາຍປະຢັດ ແລະ ຕ້ານການຟຸມເຟືອຍງົບປະມານແຫ່ງລັດ ດ້ວຍການປະຕິບັດແຜນງົບປະມານໃຫ້ຖືກຕ້ອງ ແລະ ສອດຄ່ອງ ຕາມກົດໝາຍ, ມີປະສິດທິພາບ, ປະສິດທິຜົນ ແລະ ຫຼຸດຜ່ອນລາຍຈ່າຍພາກລັດທີ່ບໍ່ຈຳເປັນລົງເທື່ອລະກ້າວ;
3) ການນຳໃຊ້ງົບປະມານຂອງລັດເຂົ້າໃນການກໍ່ສ້າງ ຫຼື ການສ້ອມແປງ; ການສະໜອງສິນຄ້າ ຫຼື ການບໍລິການວຽກງານ; ການບໍລິການທີ່ປຶກສາ ໃຫ້ແກ່ແຜນງານ ຫຼື ໂຄງການຂອງລັດ ໃຫ້ປະຕິບັດຕາມມາດຕາ 12 ຂອງກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ;
4) ປະຕິບັດນະໂຍບາຍການເງິນ-ງົບປະມານ ໃຫ້ມີຄວາມສອດຄ່ອງ ແລະ ກົມກຽວ ໂດຍຖືເອົາການປະຕິບັດລາຍຈ່າຍເງິນເດືອນເປັນບູລິມະສິດ.

**3. ດ້ານການຄຸ້ມຄອງບໍລິຫານ**

1) ສ້າງແຜນຄຸ້ມຄອງງົບປະມານໃຫ້ເປັນລະບົບ, ຕ້ານການຮົ່ວໄຫລ, ຍົກສູງປະສິດທິພາບ ແລະ ປະສິດທິຜົນໃນການບໍລິຫານການເງິນຂອງລັດໃຫ້ດີຂຶ້ນ ເພື່ອກ້າວໄປສູ່ການຮັບປະກັນລາຍຮັບພາຍໃນກຸ້ມລາຍຈ່າຍ;
2) ເອົາໃຈໃສ່ປັບປຸງກົງຈັກການຈັດຕັ້ງ ແລະ ບຸກຄະລາກອນ ໃຫ້ມີຄວາມເຂັ້ມແຂງ, ມີຈັນຍາບັນ-ຈັນຍາທຳ ເພື່ອຮັບປະກັນການປະຕິບັດໜ້າທີ່ ໃຫ້ມີຄຸນນະພາບ, ປະສິດທິພາບ ແລະ ປະສິດທິຜົນ;
3) ສືບຕໍ່ປະຕິບັດຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 09/ນຍ, ລົງວັນທີ 19 ພຶດສະພາ 2017 ວ່າດ້ວຍການປະຢັດລາຍຈ່າຍງົບປະມານຂອງລັດ.

**ມາດຕາ 5 ການຈັດຕັ້ງປະຕິບັດ**

1. ມອບໃຫ້ ອົງການປົກຄອງແຂວງ ຊີ້ນຳບັນດາ ພະແນກການ, ອົງການລັດທຽບເທົ່າ ແລະ ອົງການປົກຄອງເມືອງ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ;
2. ມອບໃຫ້ ຄະນະປະຈຳສະພາປະຊາຊົນແຂວງ, ບັນດາຄະນະກຳມະການ ແລະ ສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງ ສືບຕໍ່ຊຸກຍູ້ ແລະ ດຳເນີນການຕິດຕາມກວດກາ ການຈັດຕັ້ງປະຕິບັດ ມະຕິສະບັບນີ້ ຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 6 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາປະຊາຊົນແຂວງ**

**ເພັງນິລັນ ຄຳພັນເພັງ**